**ບົດຮຽນ 28 - ການຮູ້ຈັກພຣະປະສົງຂອງພຣະເຈົ້າ**

ໃນບົດຮຽນທີ 27 ພວກເຮົາໄດ້ຮຽນຮູ້ວ່າ ຕອນນີ້ພຣະເຈົ້າກຳລັງສ້າງຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ. ພຣະປະສົງຂອງພຣະເຈົ້າສຳລັບຄຣິສຕະຈັກແມ່ນຫຍັງ? ພຣະປະສົງຂອງພຣະເຈົ້າສຳລັບຊີວິດຂອງຂ້ອຍແມ່ນຫຍັງ? ຄຳຖາມເຫຼົ່ານີ້ຈະເປັນຈຸດສຸມຂອງບົດຮຽນນີ້.

ການເປີດເຜີຍພຣະປະສົງຂອງພຣະເຈົ້າ

ຜູ້ທີ່ເຊື່ອໃນພຣະເຈົ້າມັກສົງໄສວ່າ ພຣະເຈົ້າຢາກໃຫ້ພວກເຂົາເຮັດຫຍັງກ່ຽວກັບອາຊີບຂອງພວກເຂົາ, ການແຕ່ງງານ ແລະສິ່ງອື່ນໆ. ຢ່າງໃດກໍຕາມ, ການຮັບຟັງວິທີການອະທິຖານ ແລະ ການເສວະນາຂອງຫຼາຍຄົນແລ້ວ, ເຈົ້າອາດຄິດວ່າ ພຣະເຈົ້າໄດ້ປິດບັງພຣະປະສົງຂອງພຣະອົງ ແລະ ປະໄວ້ພຽງຂໍ້ຄຶດ ຫຼື ຮ່ອງຮອຍທີ່ກະແຈກກະຈາຍ. ດັ່ງນັ້ນ, ພວກເຂົາຈຶ່ງພະຍາຍາມຢ່າງຕໍ່ເນື່ອງ ເພື່ອສ້າງຄວາມເຂົ້າໃຈວ່າ ເປັນຫຍັງພຣະເຈົ້າຈຶ່ງເຮັດອັນນີ້ ຫຼືອັນນັ້ນ, ພຣະເຈົ້າກຳລັງກ່າວຫຍັງໂດຍຜ່ານເຫດການນີ້ ຫຼື ບຸກຄົນນີ້ ແລະ ອື່ນໆ. ທຸກສິ່ງທີ່ເກີດຂຶ້ນແມ່ນຖືວ່າ ເປັນຂໍ້ຄຶດອີກອັນໜຶ່ງຈາກພຣະເຈົ້າ. ອັນນີ້ແມ່ນຄວາມຈິງບໍ? ໃນເອເຟໂຊ 1:8 ເຮົາອ່ານວ່າ: "ເປັນພຣະຄຸນຊຶ່ງພວກເຮົາໄດ້ຮັບຢ່າງລົ້ນເຫລືອຫາທີ່ປຽບບໍ່ໄດ້." ພຣະເຈົ້າບໍ່ໄດ້ປິດບັງພຣະປະສົງຂອງພຣະອົງ. ພຣະອົງບໍ່ໄດ້ປະໄວ້ພຽງແຕ່ຂໍ້ຄຶດທີ່ກະແຈກກະຈາຍໃຫ້ພວກເຮົາ. ພຣະອົງໄດ້ໃຫ້ສະຕິປັນຍາແກ່ພວກເຮົາຢ່າງອຸດົມສົມບູນ.

ອ່ານຕື່ມໃນເອເຟໂຊ 1:9: "ພຣະເຈົ້າໄດ້ຕັ້ງໃຈໄວ້ກ່ອນແລ້ວ ໃນການເຮັດໃຫ້ພວກເຮົາຮູ້ຈັກແຜ່ນການອັນເລິກລັບໃນນໍ້າພຣະໄທຂອງພຣະອົງ ເພື່ອໃຫ້ສຳເລັດໂດຍທາງພຣະອົງ" ພຣະເຈົ້າໄດ້ເຮັດໃຫ້ພວກເຮົາຮູ້ຈັກ "ແຜ່ນການອັນເລິກລັບ ຂອງພຣະອົງ." ພວກເຮົາບໍ່ຈຳເປັນຕ້ອງເບິ່ງທີ່ຕ່າງໆ ເພື່ອຊອກຫາພຣະປະສົງຂອງພຣະອົງ. ພຣະປະສົງຂອງພຣະເຈົ້າໄດ້ຖືກເປີດເຜີຍແລ້ວ ແລະ ພົບໄດ້ໃນພຣະຄຳພີ.

ຜູ້ທີ່ເຊື່ອຫຼາຍຄົນສືບຕໍ່ອ້ອນວອນຕໍ່ພຣະເຈົ້າໃຫ້ເປີດເຜີຍພຣະປະສົງຂອງພຣະອົງກ່ຽວກັບເລື່ອງໃດໜຶ່ງ. ບາງຄັ້ງພວກເຂົາກໍຖືສິນອົດອາຫານ ແລະ ອະທິຖານເປັນເວລາຫຼາຍຊົ່ວໂມງ ເພື່ອພະຍາຍາມເຮັດໃຫ້ເຫັນພຣະປະສົງຂອງພຣະອົງຢ່າງຊັດເຈນຂຶ້ນ. ອາດເບິ່ງຄືວ່າ ພຣະເຈົ້າບໍ່ຢາກໃຫ້ໄພ່ພົນຂອງພຣະອົງຮູ້ຈັກພຣະປະສົງຂອງພຣະອົງ. ພວກເຮົາບໍ່ຕ້ອງຄິດແນວນີ້! ເອເຟໂຊ 1:9 ບອກວ່າເປັນ "ຄວາມຍິນດີ" ຂອງພຣະເຈົ້າທີ່ຈະເປີດເຜີຍພຣະປະສົງຂອງພຣະອົງ. ບໍ່ຈຳເປັນທີ່ຈະອ້ອນວອນພຣະເຈົ້າເພື່ອພະຍາຍາມໃຫ້ພຣະອົງບອກພວກເຮົາເຖິງພຣະປະສົງຂອງພຣະອົງ. ພຣະເຈົ້າຕ້ອງການໃຫ້ພວກເຮົາຮູ້ຈັກພຣະປະສົງຂອງພຣະອົງ. ອັນນີ້ຄືເຫດຜົນທີ່ພຣະອົງມອບພຣະຄຳພີໃຫ້ເຮົາ. ໃນພຣະຄຳພີ, ພວກເຮົາມີຄຳແນະນຳທັງໝົດທີ່ເຮົາຕ້ອງໃຊ້ເພື່ອຈະດຳລົງຊີວິດຕາມພຣະປະສົງຂອງພຣະເຈົ້າ. ພຣະອົງໄດ້ເປີດເຜີຍ "ແຜ່ນການອັນເລິກລັບຂອງພຣະປະສົງຂອງພຣະອົງ." "ສະນັ້ນ ຢ່າສູ່ເປັນຄົນໂງ່ຈ້າ ແຕ່ຈົ່ງຊອກຮູ້ວ່າ ສິ່ງໃດທີ່ອົງພຣະຜູ້ເປັນເຈົ້າຢາກໃຫ້ເຮົາເຮັດ" (ເອເຟໂຊ 5:17).

ພຣະເຈົ້າກຳລັງເຮັດຫຍັງຢູ່?

ພວກເຮົາຄິດຫຼາຍກ່ຽວກັບຕົວເຮົາເອງແທນທີ່ຈະປັກໃປທີ່ພຣະເຈົ້າ. ຖ້າເຮົາຮູ້ຈັກສິ່ງທີ່ພຣະເຈົ້າກຳລັງເຮັດຢູ່ໃນຍຸກແຫ່ງພຣະຄຸນ ແລະ ປັບປ່ຽນການດຳລົງຊີວິດຂອງພວກເຮົາໄປຕາມສິ່ງທີ່ພຣະອົງເຮັດ, ເຮົາຈະດຳລົງຊີວິດຕາມພຣະປະສົງຂອງພຣະອົງໄດ້. ພຣະເຈົ້າມີແຜນການກ່ອນວາງຮາກສ້າງໂລກນີ້, ກ່ອນຈະສ້າງຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ. "ດ້ວຍຫວັງວ່າ ຈະໄດ້ຊີວິດອັນນິຣັນດອນ ຊຶ່ງພຣະເຈົ້າຜູ້ບໍ່ຊົງກ່າວຄຳຕົວະ ໄດ້ຊົງສັນຍາໄວ້ຕັ້ງແຕ່ດຶກດຳບັນ" (ຕີໂຕ 1:2). ຢ່າງໃດກໍຕາມ, ພຣະເຈົ້າໄດ້ຮັກສາແຜນການນີ້ເປັນຄວາມເລິກລັບ (ຫຼືຄວາມລັບ) ຈົນກ່ວາໄດ້ຖືກເປີດເຜີຍໃຫ້ແກ່ໂປໂລ, ຜູ້ທີ່ເປັນອັກຄະສາວົກ (ໂຣມ 16:25—"ການເປີດເຜີຍຄວາມເລິກລັບ ທີ່ພຣະເຈົ້າໄດ້ປິດບັງໄວ້ກ່ອນສ້າງໂລກ").

ພວກເຮົາບໍ່ສາມາດດຳລົງຊີວິດຕາມພຣະປະສົງຂອງພຣະເຈົ້າໄດ້ ຖ້າພວກເຮົາບໍ່ເຂົ້າໃຈສິ່ງທີ່ພຣະເຈົ້າເປີດເຜີຍໃນ "ຄວາມເລິກລັບ."

ພຣະປະສົງຂອງພຣະເຈົ້າບໍ່ສັບສົນ ຫຼືຮູ້ຍາກ ຄືທີ່ຫຼາຍຄົນຄິດ. ຕົວຢ່າງ, "ນີ້ແຫຼະ ແມ່ນນ້ຳພຣະໄທຂອງພຣະເຈົ້າ ຄືໃຫ້ພວກເຈົ້າເປັນຄົນບໍລິສຸດ ແລະເວັ້ນຈາກການຜິດສິນທຳທາງເພດທຸກຮູບແບບ" (1 ເທຊະໂລນິກ 4:3). ພວກເຮົາເຂົ້າໃຈໄດ້ບໍ່ຍາກວ່າ ພຣະປະສົງຂອງພຣະເຈົ້າຄື ໃຫ້ພວກເຮົາຫຼີກລ້ຽງການຜິດສິນລະທຳທາງເພດ. "ໃນທຸກສິ່ງທຸກຢ່າງ ຈົ່ງຂອບພຣະຄຸນ ເພາະນີ້ແມ່ນຄວາມປະສົງຂອງພຣະເຈົ້າໃນພຣະເຢຊູຄຣິດກ່ຽວກັບເຈົ້າ" (1 ເທຊະໂລນິກ 5:18). ຂໍ້ນີ້ກ່າວຢ່າງຈະແຈ້ງວ່າ ພຣະປະສົງຂອງພຣະເຈົ້າແມ່ນໃຫ້ພວກເຮົາຂອບຄຸນພຣະອົງໃນທຸກສະຖານະການ. ຖ້າພວກເຮົາໃຊ້ເວລາສຶກສາຈົດຫມາຍຂອງໂປໂລ, ພວກເຮົາຈະຮູ້ວ່າ ພຣະເຈົ້າກຳລັງເຮັດຫຍັງຢູ່ໃນຍຸກນີ້. ເມື່ອພວກເຮົາວາງຊີວິດຂອງເຮົາໃຫ້ສອດຄ່ອງກັບສິ່ງທີ່ພຣະອົງກຳລັງເຮັດ, ພວກເຮົາກໍໝັ້ນໃຈໄດ້ວ່າ ເຮົາໃຊ້ຊີວິດຕາມພຣະປະສົງຂອງພຣະເຈົ້າແລ້ວ.

<u>ການຕັດສິນໃຈ</u>

ຜູ້ທີ່ເຊື່ອໃນພຣະເຈົ້າຄວນຕັດສິນໃຈແນວໃດ, ຕົວຢ່າງເຊັ່ນ: ຈະເຮັດວຽກໃດ, ຈະແຕ່ງງານກັບໃຜ, ຈະຢູ່ໃສ, ແລະອື່ນໆ? ຕໍ່ໄປນີ້ແມ່ນບາງຄຳແນະນຳທີ່ຈະຊ່ວຍທ່ານໄດ້:

1) ຕ້ອງມີແຜນການທີ່ສະໝ່ຳສະເໝີ ແລະ ເປັນລະບົບໃນການສຶກສາພຣະຄຳພີ. ຖ້າຫາກວ່າ ເຈົ້າອ່ານ ແລະ ສຶກສາພຣະຄຳຂອງພຣະເຈົ້າຢ່າງສະໝ່ຳສະເໝີ, ຄວາມຮູ້ເລື່ອງພຣະເຈົ້າຈະເພີ່ມຂຶ້ນສະເໝີ. ເຈົ້າຈະເຫັນວ່າຕົວເອງມີສະຕິປັນຍາເພີ່ມຂຶ້ນໃນການຕັດສິນໃຈ. ພຣະຄຳພີອາດຈະບໍ່ບອກເຈົ້າວ່າ ມື້ນີ້ຈະໃສ່ເສື້ອສີໃດ ຫຼື ຈະກິນຫຍັງເປັນອາຫານເຊົ້າ. ແຕ່ເນື່ອງຈາກໄດ້ລະເລີຍການສຶກສາພຣະຄຳພີ ຜູ້ເຊື່ອໃນພຣະເຈົ້າຫຼາຍຄົນຈຶ່ງບໍ່ໄດ້ຮັບຮູ້ການຊີ້ນຳຫຼາຍປານໃດໃນພຣະຄຳພີ. ຄວນສຶກສາພຣະຄຳພີທັງໝົດ, ແຕ່ຄວນໃຫ້ຄວາມສຳຄັນກັບຈົດໝາຍຂອງໂປໂລ (ພຣະທຳໂຣມຮອດຟີເລໂມນ) ເນື່ອງຈາກວ່າ

ເປັນພຣະທຳທີ່ປະກອບດ້ວຍພຣະປະສົງຂອງພຣະເຈົ້າກ່ຽວກັບຍຸກແຫ່ງພຣະຄຸນນີ້. ອັນນີ້ແມ່ນສິ່ງທີ່ສຳຄັນທີ່ສຸດທີ່ເຈົ້າສາມາດເຮັດໄດ້ ຖ້າເຈົ້າຢາກຮູ້ຈັກພຣະປະສົງຂອງພຣະເຈົ້າ.

ຮູບ

2) ຂໍຄຳແນະນຳຈາກຜູ້ທີ່ເຊື່ອຄົນອື່ນໆ ຜູ້ທີ່ໄດ້ຮັບການຮ່ຳຮຽນມາຢ່າງດີໃນພຣະຄຳຂອງພຣະເຈົ້າ. ຢ່າໃຫ້ພວກເຮົາຖືຄຳເວົ້າຂອງຜູ້ໃດຜູ້ໜຶ່ງເປັນສຽງຂອງພຣະເຈົ້າ. ຢ່າງໃດກໍຕາມ, ຄຳແນະນຳຈາກຜູ້ທີ່ເຊື່ອທີ່ເປັນຜູ້ໃຫຍ່ຝ່າຍວິນຍານແລ້ວກໍເປັນປະໂຫຍດຫຼາຍຕໍ່ການຕັດສິນໃຈຢ່າງຮອບຄອບຂອງພວກເຮົາ. "ຄົບຄົນດີມີສີແກ່ຕົວ ຄົບຄົນຊົ່ວພາຕົວໝົ່ນໝອງ" (ສຸພາສິດ 13:20) "ການປາສະຈາກທີ່ປຶກສາແຜນການກໍຈະຫລົ້ມເຫລວ: ແຕ່ຖ້າມີທີ່ປຶກສາຫລາຍຄົນແຜ່ນການກໍຈະສຳເລັດ" (ສຸພາສິດ 15:22).

3) ຖາມຄຳຖາມຕໍ່ໄປນີ້ກັບຕົວເຈົ້າເອງ, ເລື່ອງທາງເລືອກທີ່ເຈົ້າກຳລັງພິຈາລະນາ:

ກ) ມີພຣະຄຳພີຂໍ້ໃດບໍທີ່ກ່ຽວຂ້ອງກັບການຕັດສິນໃຈນີ້?

ຂ) ອັນນີ້ສົມຄວນຫຼືບໍ່ (ເໝາະສົມ, ເປັນປະໂຫຍດ)? ເບິ່ງ 1 ໂກລິນໂທ 6:12.

ຄ) ອັນນີ້ຈະຖວາຍກຽດແກ່ພຣະເຈົ້າບໍ? ເບິ່ງ 1 ໂກລິນໂທ 6:19-20; 10:31.

ງ) ອັນນີ້ຈະເປັນຕົວຢ່າງທີ່ດີກັບຄົນອື່ນບໍ? ເບິ່ງ 1 ໂກລິນໂທ 8:9.

## ການນຳໃຊ້ຄຳສອນທີ່ຜິດພາດ

ອາຈານບາງຄົນກ່າວວ່າ ພວກເຮົາສາມາດຮູ້ຈັກພຣະປະສົງຂອງພຣະເຈົ້າໄດ້ໂດຍການສັງເກດວ່າ ເຮົາມີສັນຕິສຸກຫຼືບໍ່ ກ່ຽວກັບການຕັດສິນໃຈນັ້ນໆ. ແຕ່ຄວາມຮູ້ສຶກພາຍໃນກໍເປັນພຽງອາລົມຂອງພວກເຮົາເທົ່ານັ້ນ. ສະນັ້ນ ຢ່າສັບສົນກັບສຽງຂອງພຣະເຈົ້າ. ໂກໂລຊາຍ 3:15 ບາງຄັ້ງກໍໃຊ້ເພື່ອສະໜັບສະໜູນຄວາມຄິດນີ້ "ສັນຕິສຸກພາຍໃນ."

ຖ້າເຈົ້າອ່ານໂກໂລຊາຍ 3:12-15 ເຈົ້າຈະເຫັນໄດ້ວ່າ ເນື້ອໃນຂອງພຣະທຳຕອນນີ້ແມ່ນໝາຍເຖິງການຢູ່ຮ່ວມກັນຢ່າງສັນຕິກັບສະມາຊິກຄົນອື່ນໆ ໃນພຣະກາຍຂອງພຣະຄຣິດ. ການໃຊ້ພຣະທຳໂກໂລຊາຍ 3:15 ເພື່ອອ້າງອີງເຖິງຄວາມຮູ້ສຶກພາຍໃນຂອງພວກເຮົາໃນການຊອກຫາພຣະປະສົງຂອງພຣະເຈົ້ານັ້ນ ແມ່ນບໍ່ຖືກຕ້ອງ. ການສອນແບບນີ້ສາມາດນຳໄປສູ່ການໃຊ້ຊີວິດຕາມອາລົມໄດ້ງ່າຍຫຼາຍ ແທນທີ່ຈະດຳລົງຊີວິດຕາມຄວາມປະສົງຂອງພຣະເຈົ້າທີ່ຊົງຖືກເປີດເຜີຍນັ້ນ. ອັນນີ້ເຮັດໃຫ້ເກີດຄວາມສັບສົນ, ຄວາມບໍ່ໝັ້ນຄົງ ແລະ ຄວາມເຫັນແກ່ຕົວ.

ອີກບາງຄົນສອນວ່າ ພວກເຮົາຕ້ອງເບິ່ງສະຖານະການຂອງພວກເຮົາ ເພື່ອຊອກຫາພຣະປະສົງຂອງພຣະເຈົ້າ. ຖ້າມີບາງສິ່ງບາງຢ່າງດີ, ຫຼືບໍ່ດີ, ຫຼືຜິດປົກກະຕິເກີດຂຶ້ນ, ຜູ້ທີ່ເຊື່ອໃນພຣະເຈົ້າຫຼາຍຄົນຄິດວ່າ ພຣະເຈົ້າໄດ້ເຮັດໃຫ້ເກີດເຫດການນີ້ ເພື່ອບອກພວກເຂົາກ່ຽວກັບພຣະປະສົງຂອງພຣະອົງ. [ເຊັ່ນ: "ຖ້າສາວໜ້າຮັກຢູ່ໃນໂຮງຮຽນຂອງຂ້ອຍນັ່ງກັບຂ້ອຍໃນເວລາກິນເຂົ້າທ່ຽງ, ພຣະເຈົ້າກຳລັງບອກຂ້ອຍໃຫ້ແຕ່ງງານກັບນາງ." "ຖ້າຂ້ອຍເຮັດລົດລົ້ມໃນຂະນະທີ່ຂັບລົດໄປສຳພາດວຽກ, ພຣະເຈົ້າກຳລັງບອກຂ້ອຍບໍ່ໃຫ້ເຮັດວຽກກັບບໍລິສັດນັ້ນ." ແລະອື່ນໆ.] ແນ່ນອນ, ຂ້ອຍຄວນພິຈາລະນາສະຖານະການຂອງຂ້ອຍໃນເວລາຕັດສິນໃຈ. [ເຊັ່ນ: "ຂ້ອຍມີເງິນພຽງພໍທີ່ຈະເຮັດສິ່ງນີ້ບໍ? ມັນຈະໃຊ້ເວລາດົນປານໃດ? ມັນຈະມີຜົນສະທ້ອນແນວໃດກັບຄອບຄົວ ແລະ ສຸຂະພາບຂອງຂ້ອຍບໍ?" ແລະອື່ນໆ. ຂ້ອຍບໍ່ຄວນຄິດວ່າ ການທີ່ລົດຂ້ອຍເພ ຫຼືຜູ້ຍິງຢູ່ໃນໂຮງຮຽນທີ່ນັ່ງຢູ່ຂ້າງຂ້ອຍແມ່ນແຜນການຂອງພຣະເຈົ້າ. ພຣະຄຳພີບໍ່ໄດ້ບອກຂ້ອຍວ່າ ພຣະເຈົ້າຈະເຮັດໃຫ້ເກີດສິ່ງເຫຼົ່ານີ້. ຂ້ອຍພຽງແຕ່ຄາດເດົາ ແລະ ໃຊ້ຈິນຕະນາການຂອງຂ້ອຍ; ເວລາທີ່ຂ້ອຍຄິດວ່າ ພຣະເຈົ້າໄດ້ເຮັດບາງສິ່ງບາງຢ່າງ (ເຮັດໃຫ້ລົດຂອງຂ້ອຍພັງ) ເພາະວ່າພຣະອົງຢາກບອກຂ້ອຍບາງຢ່າງ (ເຊັ່ນ: "ຢ່າເຮັດວຽກໃຫ້ບໍລິສັດນັ້ນ"). ອັນນີ້ບໍ່ແມ່ນວິທີທີ່ຈະຮູ້ຈັກພຣະປະສົງຂອງພຣະເຈົ້າສຳລັບຊີວິດຂອງຂ້ອຍໄດ້.

ພຣະເຈົ້າຕ້ອງການໃຫ້ເຈົ້າຮູ້ຈັກພຣະປະສົງຂອງພຣະອົງ. ຍ້ອນສິ່ງນີ້ ຈຶ່ງເຮັດໃຫ້ພຣະເຈົ້າພໍພຣະໄທທີ່ຈະເປີດເຜີຍພຣະປະສົງຂອງພຣະອົງໃນພຣະຄຳພີ. ການສຶກສາພຣະຄຳພີຢ່າງສະໝ່ຳສະເໝີ ແລະ ເປັນລະບົບການຈະເຮັດໃຫ້ເຈົ້າມີສະຕິປັນຍາທີ່ຈຳເປັນໃນການຕັດສິນໃຈຢ່າງສະຫລາດ, ການຕັດສິນໃຈຝ່າຍວິນຍານທີ່ຖວາຍກຽດພຣະຜູ້ເປັນເຈົ້າ.

<u>ຄຳຖາມທວນຄືນ ບົດຮຽນ 28 - ການຮູ້ຈັກພຣະປະສົງຂອງພຣະເຈົ້າ</u>

<u>ຖືກ ຫຼື ຜິດ</u>

1. ພຣະປະສົງຂອງພຣະເຈົ້າຖືກເຊື່ອງໄວ້, ແຕ່ພຣະອົງໄດ້ປະຂໍ້ຄຶດບາງຢ່າງໄວ້ສຳລັບພວກເຮົາ.
2. ພຣະເຈົ້າຕ້ອງການໃຫ້ພວກເຮົາອ້ອນວອນໃຫ້ພຣະອົງເປີດເຜີຍພຣະປະສົງຂອງພຣະອົງ.
3. ການຮູ້ຈັກພຣະປະສົງຂອງພຣະເຈົ້າເປັນຂະບວນການທີ່ສັບຊ້ອນຫຼາຍ.
4. ເມື່ອຈະຕັດສິນໃຈ ຄວນຂໍຄຳແນະນຳຈາກຜູ້ທີ່ເຊື່ອຄົນອື່ນໆ ທີ່ມີຄວາມຮູ້ໃນພຣະຄຳຂອງພຣະເຈົ້າເປັນຢ່າງດີ.

ຄຳຖາມແບບປາລະໄນ

5. ເມື່ອຈະຕັດສິນໃຈ ພວກເຮົາຄວນ:

ກ) ຄິດວ່າ ພຣະຄຳພີຈະບໍ່ໃຫ້ການຊ່ວຍເຫຼືອໃນພາກປະຕິບັດ.

ຂ) ເປີດພຣະຄຳພີໂດຍບໍ່ໄດ້ເລືອກໄວ້ ແລະ ເຊື່ອວ່າ ພຣະເຈົ້າຈະສະແດງຂໍ້ໜຶ່ງໃນໜ້ານັ້ນເປັນຄຳແນະນຳໃຫ້ເຈົ້າ

ຄ) ເຮັດຕາມສິ່ງທີ່ອາຈານ ຫຼື ປະໂລຫິດບອກພວກເຮົາເຮັດ.

ງ) ອ່ານພຣະຄຳພີ ແລະ ສັງເກດວ່າພຣະຄຳພີຂໍ້ໃດທີ່ກ່ຽວຂ້ອງກັບການຕັດສິນໃຈຂອງພວກເຮົາ.

6. ພຣະເຈົ້າເປີດເຜີຍພຣະປະສົງຂອງພຣະອົງຕໍ່ພວກເຮົາ:

ກ) ໂດຍການໃຫ້ໝາຍສຳຄັນຕ່າງໆ ຜ່ານສະຖານະການໃນຊີວິດຂອງພວກເຮົາ.

ຂ) ຜ່ານທາງພຣະຄຳພີ.

ຄ) ໂດຍການໃຫ້ພວກເຮົາມີສັນຕິສຸກພາຍໃນ.

ງ) ຜ່ານຕາຕະລາງທາງໂຫລາສາດ, ຜູ້ເບິ່ງດວງໂດຍລາຍມື, ໂດຍໃຊ້ໄພ້ ແລະ ອື່ນໆ.

7. ອີງຕາມເອເຟໂຊ 1:9, ພຣະເຈົ້າ:

ກ) ໄດ້ເປີດເຜີຍແຜນການອັນເລິກລັບຂອງພຣະອົງ.

ຂ) ບໍ່ໄດ້ເປີດເຜີຍແຜນການອັນເລິກລັບຂອງພຣະອົງ.

ຄ) ຈະເປີດເຜີຍແຜນການຂອງພຣະອົງໃນເວລາທີ່ພວກເຮົາໄປສະຫວັນ.

ງ) ກຳລັງເປີດເຜີຍແຜນການຂອງພຣະອົງດ້ວຍຫຼາຍຊ່ອງທາງ.

ຕື່ມໃສ່ຊ່ອງຫວ່າງ

8. ພຣະເຈົ້າຊົງມີແຜນການກ່ອນ____________________ເລີ່ມສ້າງຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ.

9. ມັນເປັນສິ່ງສຳຄັນທີ່ຈະມີ____________ແລະ_____________ວາງແຜນສຶກສາພຣະຄຳພີ.

10. ຄວາມຮູ້ສຶກພາຍໃນເປັນພຽງແຕ່_____________ຂອງພວກເຮົາ ແລະບໍ່ຄວນສັບສົນກັບສຽງຂອງພຣະເຈົ້າ.

ສຳລັບການສຶກສາເພີ່ມເຕີມ

1. ໃນຍຸກນີ້, ພຣະປະສົງຂອງພຣະເຈົ້າກ່ຽວກັບພຣະບັນຍັດມີຄືແນວໃດ? ເບິ່ງ ໂຣມ 6:14; ຄາລາເຕຍ 5:18.

2. ພວກເຮົາຄວນຂໍໃຫ້ພຣະເຈົ້າເປີດເຜີຍພຣະປະສົງຂອງພຣະອົງໃນແບບທີ່ພວກເຮົາເຫັນໄດ້ບໍ? ເບິ່ງ 2 ໂກລິນໂທ 5:7.

3. ອ່ານໂຣມ 12:9-21 ແລະ ບອກຢ່າງໜ້ອຍຫ້າຢ່າງວ່າ ຂໍ້ນີ້ຊ່ວຍເຈົ້າໃຫ້ດຳລົງຊີວິດຕາມພຣະປະສົງຂອງພຣະເຈົ້າຄືແນວໃດແດ່.
4. ອ່ານເອເຟໂຊ 4:25-32 ແລະ ບອກຢ່າງໜ້ອຍສີ່ຢ່າງວ່າ ຂໍ້ນີ້ຊ່ວຍເຈົ້າໃຫ້ດຳເນີນຊີວິດຕາມນ້ຳພຣະໄທຂອງພຣະເຈົ້າໄດ້ແນວໃດແດ່.
5. ອ່ານໂກໂລຊາຍ 3:12-25 ແລະ ບອກຕົວຢ່າງໜ້ອຍສີ່ຢ່າງວ່າ ຂໍ້ນີ້ຊ່ວຍໃຫ້ເຈົ້າດຳລົງຊີວິດຕາມນ້ຳພຣະໄທຂອງພຣະເຈົ້າຄືແນວໃດແດ່.
6. ຕາມ 1 ຕີໂມທຽວ 2:3-4 ພຣະປະສົງຂອງພຣະເຈົ້າແມ່ນຫຍັງ?
7. ພຣະທຳ 2 ຕີໂມທຽວ 2:15 ແລະ 2 ຕີໂມທຽວ 3:16 ມີຄວາມກ່ຽວຂ້ອງກັບການຮູ້ຈັກພຣະປະສົງຂອງພຣະເຈົ້າຄືແນວໃດແດ່?
8. ຄວາມປາຖະໜາສ່ວນຕົວ ແລະ ສາມັນສຳນຶກຂອງເຈົ້າສອດຄ່ອງກັນກັບການຮູ້ຈັກພຣະປະສົງຂອງພຣະເຈົ້າແນວໃດແດ່?
9. ພຣະທຳໂຣມ 12:1-2 ບອກພວກເຮົາວ່າແນວໃດ ກ່ຽວກັບພຣະປະສົງຂອງພຣະເຈົ້າ?
10. ຈົ່ງອ່ານພຣະທຳພວກຜູ້ປົກຄອງ 6:36-40. ຜູ້ທີ່ເຊື່ອໃນພຣະເຈົ້າບາງຄົນເວົ້າວ່າ ພວກເຮົາຕ້ອງ "ເອົາຂົນແກະວາງໄວ້ເທິງດິນ" ເພື່ອຈະຮູ້ຄວາມປະສົງຂອງພຣະເຈົ້າ. ເຮົາຄວນເຮັດຕາມແບບຢ່າງຂອງກີເດໂອນບໍ ເພື່ອຈະຮູ້ຈັກພຣະປະສົງຂອງພຣະເຈົ້າໃນສະໄໝນີ້?